ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 09 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 22 JUL 2022

# ຂໍ້ຕົກລົງ
# ວ່າດ້ວຍການໄດ້ມາ ແລະ ການຊື້ຂາດຊັບສິນ ຂອງບໍລິສັດຈົດທະບຽນ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 56/ສຄຄຊ, ລົງວັນທີ 5 ກໍລະກົດ 2022.

### ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການໄດ້ມາ ແລະ ການຊື້ຂາດຊັບສິນ ເພື່ອເປັນບ່ອນອີງໃຫ້ແກ່ການດຳເນີນທຸລະກຳການໄດ້ມາ ແລະ ການຊື້ຂາດຊັບສິນທີ່ກ່ຽວຂ້ອງກັບການດຳເນີນທຸລະກິດຂອງບໍລິສັດຈົດທະບຽນ ແນໃສ່ເຮັດໃຫ້ການດຳເນີນທຸລະກິດຂອງບໍລິສັດຈົດທະບຽນ ມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ ແນ່ໃສ່ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຜູ້ຖືຮຸ້ນ.

**ມາດຕາ 2 ການໄດ້ມາ ແລະ ການຊື້ຂາດຊັບສິນ**

ການໄດ້ມາ ແລະ ການຊື້ຂາດຊັບສິນ ແມ່ນການ ຊື້, ຂາຍ, ມອບ ຫຼື ໂອນ ຊັບສິນໃດໜຶ່ງທີ່ມີມູນຄ່າສູງ ຂອງບໍລິສັດຈົດທະບຽນ ຊຶ່ງສົ່ງຜົນກະທົບຕໍ່ໂຄງສ້າງຊັບສິນ, ໜີ້ສິນ, ສ່ວນຂອງຜູ້ຖືຮຸ້ນ ແລະ ການຄຸ້ມຄອງບໍລິຫານຂອງບໍລິສັດຈົດທະບຽນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ຊັບສິນ** ໝາຍເຖິງ ຮຸ້ນສາມັນ, ທີ່ດິນ, ອາຄານ, ເງິນລົງທຶນ, ເຄື່ອງຈັກ, ພາຫະນະ ຍົກເວັ້ນ ຊັບສິນໝູນວຽນ ທີ່ບໍລິສັດນໍາໃຊ້ໃນການປະກອບດໍາເນີນທຸລະກິດ ແລະ ການລົງທຶນເພື່ອສະພາບຄ່ອງ ເປັນຕົ້ນ ວັດຖຸດິບທີ່ໃຊ້ໃນການຜະລິດ ຫຼື ບໍລິການ, ເງິນສົດ, ລູກໜີ້ການຄ້າ, ສິນຄ້າໃນສາງ, ການລົງທຶນໃນຮຸ້ນ, ຮຸ້ນກູ້ ແລະ ພັນທະບັດລັດຖະບານ;

2. **ມູນຄ່າຂອງສິ່ງຕອບແທນ** ໝາຍເຖິງ ມູນຄ່າຂອງຊັບສິນ ຫຼື ມູນຄ່າຕາມບັນຊີ (Book Value) ຂອງຊັບສິນດັ່ງກ່າວ ເພື່ອນໍາມາທຽບກັບຊັບສິນທັງໝົດຂອງບໍລິສັດ;

3. **ມູນຄ່າການອອກຮຸ້ນເພື່ອຊໍາລະຄ່າຊັບສິນ** ໝາຍເຖິງ ຈໍານວນຮຸ້ນສາມັນທີ່ບໍລິສັດຈົດທະບຽນຈະອອກເພື່ອຊໍາລະຄ່າຊັບສິນ;

4. **ບຸກຄົນທີ່ກ່ຽວພັນ** ໝາຍເຖິງ:

4.1 ບຸກຄົນທີ່ຖືຮຸ້ນຂອງ ບໍລິສັດຈົດທະບຽນ ແຕ່ ຫ້າສ່ວນຮ້ອຍ (5%) ຂຶ້ນໄປຂອງຈໍານວນຮຸ້ນທັງໝົດ;

4.2 ຜູ້ບໍລິຫານ ຂອງບໍລິສັດຈົດທະບຽນ.

5. **ນິຕິບຸກຄົນທີ່ກ່ຽວພັນ** ໝາຍເຖິງ:

5.1 ນິຕິບຸກຄົນທີ່ຖືຮຸ້ນຂອງ ບໍລິສັດຈົດທະບຽນ ຫຼື ນິຕິບຸກຄົນທີ່ຖືກຖືຮຸ້ນໂດຍບໍລິສັດຈົດທະ ບຽນໃນອັດຕາສ່ວນແຕ່ ຫ້າສ່ວນຮ້ອຍ (5%) ຂຶ້ນໄປ ຂອງຈໍານວນຮຸ້ນທັງໝົດ;

5.2 ນິຕິບຸກຄົນທີ່ ບຸກຄົນທີ່ກ່ຽວພັນ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 4.1 ຫຼື ຜູ້ບໍລິຫານບໍລິສັດຈົດທະບຽນ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 4.2 ຂອງມາດຕານີ້ ເປັນຜູ້ບໍລິຫານ ຫຼື ຖືຮຸ້ນແຕ່ ສິບສ່ວນຮ້ອຍ (10%) ຂຶ້ນໄປ.

### ມາດຕາ 4 ຫຼັກການ

ການໄດ້ມາ ແລະ ການຊື້ຂາດຊັບສິນ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຖືຮຸ້ນ;
2. ປະສິດທິພາບ, ໂປ່ງໃສ, ຍຸຕິທໍາ ແລະ ສາມາດກວດສອບໄດ້;
3. ການມີສ່ວນຮ່ວມຜູ້ຖືຮຸ້ນໃນການຕັດສິນໃຈ;
4. ປະຕິບັດຕາມຂັ້ນຕອນຢ່າງຖືກຕ້ອງ;
5. ເປີດເຜີຍຂໍ້ມູນໃຫ້ຜູ້ຖືຮຸ້ນ ຊາບ.

### ມາດຕາ 5 ຂອບເຂດການນໍາໃຊ້

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບໍລິສັດຈົດທະບຽນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໄດ້ມາ ແລະ ການຊື້ຂາດຊັບສິນ ຢູ່ ສປປ ລາວ.

## ໝວດທີ 2
## ຂັ້ນຕອນ, ຮູບແບບການຄິດໄລ່ ແລະ ລາຄາທີ່ນໍາໃຊ້ໃນການຄິດໄລ່

### ມາດຕາ 6 ຂັ້ນຕອນກ່ຽວກັບການດໍາເນີນທຸລະກໍາ ການໄດ້ມາ ແລະ ການຊື້ຂາດຊັບສິນ

ການດໍາເນີນທຸລະກໍາ ການໄດ້ມາ ແລະ ການຊື້ຂາດຊັບສິນ ບໍລິສັດຈົດທະບຽນ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຄົ້ນຄວ້າ ກ່ຽວກັບການໄດ້ມາ ແລະ ການຊື້ຂາດຊັບສິນຂອງ ບໍລິສັດຈົດທະບຽນ ພ້ອມທັງຄິດໄລ່ອັດຕາສ່ວນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;
2. ອະນຸມັດລາຍການໄດ້ມາ ແລະ ການຊື້ຂາດຊັບສິນ;
3. ລາຍງານ ແລະ ເປີດເຜີຍຂໍ້ມູນ ກ່ຽວກັບການໄດ້ມາ ແລະ ການຊື້ຂາດຊັບສິນ.

**ມາດຕາ 7 ການຄິດໄລ່ອັດຕາສ່ວນລາຍການໄດ້ມາ ແລະ ການຊື້ຂາດຊັບສິນ**

ການຄິດໄລ່ອັດຕາສ່ວນລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ມີ 4 ຮູບແບບ ດັ່ງນີ້:

1. ຮູບແບບ ມູນຄ່າຊັບສິນສຸດທິ;
2. ຮູບແບບ ມູນຄ່າຂອງຊັບສິນລວມ;
3. ຮູບແບບ ມູນຄ່າກຳໄລສຸດທິ;
4. ຮູບແບບ ມູນຄ່າການອອກຈຳໜ່າຍຮຸ້ນເພື່ອຊຳລະຄ່າຊັບສິນ.

ບໍລິສັດຈົດທະບຽນ ຕ້ອງຄິດໄລ່ ອັດຕາສ່ວນລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ຕາມທີ່ໄດ້ກຳນົດໃນວັກທີໜຶ່ງຂອງມາດຕານີ້ ໂດຍຖືເອົາຜົນການຄິດໄລ່ທີ່ມີອັດຕາສ່ວນສູງສຸດ ມາເປັນບ່ອນອີງເພື່ອພິຈາລະນາອະນຸມັດລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ດັ່ງກ່າວ.

ກໍລະນີ ບໍລິສັດຈົດທະບຽນເປັນກຸ່ມບໍລິສັດ ເອກະສານລາຍງານການເງິນ ແມ່ນນຳໃຊ້ແບບລວມກິດຈະການປີລ່າສຸດທີ່ຜ່ານການກວດສອບຈາກ ບໍລິສັດກວດສອບທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ການໄດ້ມາ ຫຼື ການຊື້ຂາດຊັບສິນ ກໍລະນີ ເປັນການຄວບກິດຈະການ ຫຼື ການຄອບຄອງກິດຈະການ ບໍລິສັດຈົດທະບຽນ ຫຼື ພາກສ່ວນທີ່ກ່ຽວຂ້ອງ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 8 ຮູບແບບມູນຄ່າຊັບສິນສຸດທິ**

ອັດຕາສ່ວນຕາມຮູບແບບມູນຄ່າຊັບສິນສຸດທິ ໃຫ້ປະຕິບັດ ດັ່ງນີ້:

**(ຊັບສິນສຸດທິ ຂອງນິຕິບຸກຄົນອື່ນ ທີ່ບໍລິສັດຈົດທະບຽນມີລາຍການໄດ້ມາ ແລະ ການຊື້ຂາດຊັບສິນ x ອັດຕາສ່ວນຂອງຮຸ້ນ ທີ່ຊື້ ຫຼື ຂາຍ ÷ ຊັບສິນສຸດທິຂອງບໍລິສັດຈົດທະບຽນ) x ໜຶ່ງຮ້ອຍ.**

ການຄິດໄລ່ຕາມຮູບແບບດັ່ງກ່າວ ແມ່ນໃຫ້ນຳໃຊ້ສະເພາະລາຍ ການໄດ້ມາ ແລະ ການຊື້ຂາດຊັບສິນໃນຮູບແບບເງິນລົງທຶນໃນຊັບສິນທີ່ເປັນຮຸ້ນເທົ່ານັ້ນ.

**ມາດຕາ 9 ຮູບແບບມູນຄ່າຂອງຊັບສິນລວມ**

ອັດຕາສ່ວນຕາມຮູບແບບມູນຄ່າຂອງຊັບສິນລວມ ໃຫ້ປະຕິບັດ ດັ່ງນີ້:

**(ມູນຄ່າຂອງຊັບສິນລວມ ÷ ຊັບສິນລວມຂອງບໍລິສັດຈົດທະບຽນ) x ໜຶ່ງຮ້ອຍ**

ກໍລະນີ ຊັບສິນທີ່ບໍ່ແມ່ນຮຸ້ນ, ມູນຄ່າຂອງຊັບສິນລວມ ແມ່ນໃຫ້ກຳນົດເອົາ ມູນຄ່າທາງບັນຊີ ທຽບກັບ ມູນຄ່າທີ່ຈະຊື້ ຫຼື ຂາຍຕົວຈິງ ທີ່ຜ່ານການປະເມີນລາຄາຈາກບໍລິສັດປະເມີນມູນຄ່າຊັບສິນ ໂຕທີ່ສູງກວ່າມາເປັນພື້ນ ຖານການຄິດໄລ່.

ກໍລະນີ ຊັບສິນທີ່ແມ່ນຮຸ້ນ, ມູນຄ່າຂອງຊັບສິນລວມ ແມ່ນໃຫ້ກໍານົດເອົາ ຊັບສິນລວມ ຂອງນິຕິບຸກຄົນອື່ນ x ອັດຕາສ່ວນຂອງຮຸ້ນ ທີ່ຈະຊື້ ຫຼື ຂາຍ ທຽບກັບ ມູນຄ່າທີ່ຈະຊື້ ຫຼື ຂາຍຕົວຈິງ ໂດຍທີ່ສູງກວ່າມາເປັນພື້ນຖານການຄິດໄລ່. ຖ້າເປັນ ຮຸ້ນຈົດທະບຽນ ມູນຄ່າທີ່ຈະຊື້ ຫຼື ຂາຍຕົວຈິງ ທີ່ນໍາມາໃຊ້ໃນການຄິດໄລ່ແມ່ນໃຫ້ອີງໃສ່ລາຄາຮຸ້ນປະຈຸບັນໃນຕະຫຼາດຫຼັກຊັບ.

### ມາດຕາ 10 ຮູບແບບມູນຄ່າຂອງກໍາໄລສຸດທິ

ອັດຕາສ່ວນຕາມຮູບແບບມູນຄ່າຂອງກໍາໄລສຸດທິ ໃຫ້ນໍາໃຊ້ສະເພາະລາຍ ການໄດ້ມາ ແລະ ການຊື້ຂາດຊັບສິນ ໃນຮູບແບບເງິນລົງທຶນໃນຊັບສິນທີ່ເປັນຮຸ້ນເທົ່ານັ້ນ ປະຕິບັດ ດັ່ງນີ້:

**(ກໍາໄລສຸດທິຂອງນິຕິບຸກຄົນອື່ນ ທີ່ບໍລິສັດຈົດທະບຽນມີລາຍການໄດ້ມາ ແລະ ການຊື້ຂາດຊັບສິນ x ອັດຕາສ່ວນຂອງຮຸ້ນ ທີ່ຊື້ ຫຼື ຂາຍ ÷ ກໍາໄລສຸດທິຂອງບໍລິສັດຈົດທະບຽນ) x ໜຶ່ງຮ້ອຍ.**

### ມາດຕາ 11 ຮູບແບບມູນຄ່າການອອກຮຸ້ນເພື່ອຊໍາລະຄ່າຊັບສິນ

ອັດຕາສ່ວນຕາມຮູບແບບມູນຄ່າການອອກຈໍາໜ່າຍຮຸ້ນເພື່ອຊໍາລະຄ່າຊັບສິນ ໃຫ້ນໍາໃຊ້ກັບລາຍການໄດ້ມາຊັບສິນ ໃນຮູບແບບການອອກຈໍາໜ່າຍຮຸ້ນ ປະຕິບັດ ດັ່ງນີ້:

**(ຈໍານວນຮຸ້ນທີ່ຈະອອກຈໍາໜ່າຍຂອງບໍລິສັດຈົດທະບຽນເພື່ອຊໍາລະຄ່າຊັບສິນ ÷ ຈໍານວນຮຸ້ນທີ່ຖອກເຕັມແລ້ວ) x ໜຶ່ງຮ້ອຍ.**

### ມາດຕາ 12 ອັດຕາສ່ວນລາຍການໄດ້ມາ ຫຼື ການຊື້ຂາດຊັບສິນ

ອັດຕາສ່ວນລາຍການໄດ້ມາ ຫຼື ການຊື້ຂາດຊັບສິນ ຕ້ອງປະຕິບັດ ດັ່ງນີ້:

1. ອັດຕາສ່ວນລາຍການໄດ້ມາ ຫຼື ການຊື້ຂາດຊັບສິນ ແຕ່ ຫ້າສ່ວນຮ້ອຍ (5%) ຂຶ້ນໄປ ແລະ ບໍ່ເກີນ ຫ້າສິບສ່ວນຮ້ອຍ (50%) ແມ່ນໃຫ້ປະຕິບັດຕາມກົດລະບຽບພາຍໃນຂອງບໍລິສັດບໍລິສັດຈົດທະບຽນ;
2. ອັດຕາສ່ວນລາຍການໄດ້ມາ ຫຼື ການຊື້ຂາດຊັບສິນ ແຕ່ ຫ້າສິບສ່ວນຮ້ອຍ (50%) ຂຶ້ນໄປ ແຕ່ບໍ່ເກີນ (100%) ຕ້ອງໄດ້ຮັບອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ. ພ້ອມນັ້ນ ບໍລິສັດຈົດທະບຽນ ຕ້ອງແຕ່ງຕັ້ງບໍລິສັດຫຼັກຊັບ ເພື່ອເປັນທີ່ປຶກສາທາງດ້ານການເງິນ, ທີ່ປຶກສາທາງດ້ານການເງິນອິດສະລະ, ທີ່ປຶກສາດ້ານກົດໝາຍ ແລະ ຜູ້ປະເມີນມູນຄ່າຊັບສິນ ເພື່ອໃຫ້ຄໍາປຶກສາ, ກະກຽມຄວາມພ້ອມຮອບດ້ານ ແລະ ມີຄໍາເຫັນຕໍ່ການໄດ້ມາ ຫຼື ການຊື້ຂາດຊັບສິນ.
3. ອັດຕາສ່ວນລາຍການໄດ້ມາ ຫຼື ການຊື້ຂາດຊັບສິນ ແຕ່ ຮ້ອຍສ່ວນຮ້ອຍ (100%) ຂຶ້ນໄປ ຫຼື ມີການປ່ຽນແປງທຸລະກິດຕົ້ນຕໍ ຖືວ່າເປັນການຈົດທະບຽນທາງອ້ອມ ເປົ້າໝາຍ ບໍລິສັດ ຫຼື ຊັບສິນ ທີ່ບໍລິສັດຈົດທະບຽນຈະຊື້ ຕ້ອງມີເງື່ອນໄຂຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງວ່າດ້ວຍການອອກຈໍາໜ່າຍຮຸ້ນ, ການຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ຕ້ອງປະຕິບັດຕາມທີ່ໄດ້ກໍານົດໄວ້ໃນລະບຽບການກ່ຽວຂ້ອງທີ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບວາງອອກ.

### ມາດຕາ 13 ລາຄາຂອງຊັບສິນທີ່ນໍາໃຊ້ໃນການຄິດໄລ່

ບໍລິສັດຈົດທະບຽນ ຕ້ອງອະທິບາຍ ແລະ ວິເຄາະລາຍລະອຽດກ່ຽວກັບວິທີການ, ຂໍ້ມູນ ແລະ ປັດໃຈອື່ນໆ ທີ່ນໍາໃຊ້ເຂົ້າໃນການປະເມີນມູນຄ່າຊັບສິນ ຫຼື ກໍານົດລາຄາ ພ້ອມທັງ ເປີດເຜີຍໃນບົດລາຍງານກ່ຽວກັບການໄດ້ມາ ແລະ ການຊື້ຂາດຊັບສິນ. ພ້ອມນັ້ນ, ສະພາບໍລິຫານຂອງບໍລິສັດຈົດທະບຽນ ຕ້ອງມີຄໍາເຫັນຕໍ່ຄວາມເໝາະສົມທາງດ້ານສົມມຸດຖານ, ວິທີການ ແລະ ບ່ອນອີງຕ່າງໆ ທີ່ນໍາໃຊ້ເຂົ້າໃນການປະເມີນມູນຄ່າ

ຊັບສິນ ແລະ ຜົນຂອງການປະເມີນມູນຄ່າຊັບສິນດັ່ງກ່າວ ໃນບົດລາຍງານກ່ຽວກັບການໄດ້ມາ ແລະ ການຊື້ຂາດຊັບສິນ ພ້ອມທັງ ປຽບທຽບກັບລາຄາຕະຫຼາດ, ອັດຕາສ່ວນລາຄາຮຸ້ນຕໍ່ກໍາໄລສຸດທິຕໍ່ຮຸ້ນ (P/E Ratio) ຫຼື ວິທີການອື່ນໆ.

## ໝວດທີ 3
## ການພິຈາລະນາ, ການລາຍງານ ແລະ ການເປີດເຜີຍຂໍ້ມູນ

### ມາດຕາ 14 ການພິຈາລະນາການໄດ້ມາ ແລະ ການຊື້ຂາດຊັບສິນ

ຄະນະກໍາມະການກວດສອບ ກ່ຽວກັບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ຕ້ອງປະກອບຄໍາເຫັນຕໍ່ກັບແຜນການໄດ້ມາ ແລະ ການຊື້ຂາດຊັບສິນ ກ່ອນສະເໜີເຂົ້າກອງປະຊຸມສະພາບໍລິຫານ ເພື່ອພິຈາລະນາ.

ການພິຈາລະນາແຜນການໄດ້ມາ ຫຼື ການຊື້ຂາດຊັບສິນ ຂອງສະພາບໍລິຫານ ຕ້ອງປະກອບມີ ສະມາຊິກສະພາບໍລິຫານເຂົ້າຮ່ວມຫຼາຍກວ່າ ໜຶ່ງສ່ວນສອງ ຂອງຈໍານວນສະມາຊິກສະພາບໍລິຫານ ທີ່ບໍ່ເປັນບຸກຄົນທີ່ກ່ຽວພັນ.

ສະພາບໍລິຫານ ຕ້ອງຄົ້ນຄວ້າ ແລະ ມີຄໍາເຫັນ ກ່ຽວກັບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ວ່າແມ່ນລາຍການທີ່ກ່ຽວພັນ ຫຼື ບໍ່. ກໍລະນີ ສະພາບໍລິຫານ ມີສະມາຊິກທີ່ເປັນບຸກຄົນທີ່ກ່ຽວພັນ ຫຼາຍກວ່າ ໜຶ່ງສ່ວນສອງ ຂອງຈໍານວນສະມາຊິກສະພາບໍລິຫານທັງໝົດ ຕ້ອງສົ່ງລາຍການໄດ້ມາ ແລະ ການຊື້ຂາດຊັບສິນດັ່ງກ່າວ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ.

ສະມາຊິກສະພາບໍລິຫານ ທີ່ເປັນບຸກຄົນທີ່ກ່ຽວພັນ ບໍ່ມີສິດລົງຄະແນນສຽງຕໍ່ກັບວາລະດັ່ງກ່າວ.

### ມາດຕາ 15 ການເປີດເຜີຍຂໍ້ມູນກ່ຽວກັບແຜນການໄດ້ມາ ແລະ ການຊື້ຂາດຊັບສິນ

ບໍລິສັດຈົດທະບຽນ ຕ້ອງລາຍງານ ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຊາບ ຢ່າງເປັນລາຍລັກອັກສອນ ກ່ຽວກັບແຜນການໄດ້ມາ ແລະ ການຊື້ຂາດຊັບສິນ ພ້ອມທັງ ເປີດເຜີຍຂໍ້ມູນດັ່ງກ່າວໃຫ້ແກ່ມວນຊົນຊາບ ຜ່ານເວັບໄຊຂອງ ຕະຫຼາດຫຼັກຊັບ ແລະ ເວັບໄຊຂອງບໍລິສັດ ພາຍໃນເວລາ 1 ວັນລັດຖະການ ພາຍຫຼັງວັນສະພາບໍລິຫານມີມະຕິຕໍ່ບັນຫາດັ່ງກ່າວ.

### ມາດຕາ 16 ແຜນການໄດ້ມາ ແລະ ການຊື້ຂາດຊັບສິນ

ແຜນການໄດ້ມາ ແລະ ການຊື້ຂາດຊັບສິນ ຕ້ອງປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຄວາມເປັນມາ ແລະ ວັດຖຸປະສົງການໄດ້ມາ ແລະ ການຊື້ຂາດຊັບສິນ;
2. ສະຫຼຸບຫຍໍ້ກ່ຽວກັບແຜນການໄດ້ມາ ແລະ ການຊື້ຂາດຊັບສິນ;
3. ຂໍ້ມູນກ່ຽວກັບຜູ້ຊື້ ຂາຍຊັບສິນ ເປັນຕົ້ນ ຊື່ ແລະ ທີ່ຕັ້ງຂອງບໍລິສັດ, ການດໍາເນີນທຸລະກິດ, ຜູ້ມີອໍານາດຄວບຄຸມ. ກໍລະນີ ເປັນບຸກຄົນ ຕ້ອງປະກອບມີຂໍ້ມູນກ່ຽວກັບ ຊື່ ແລະ ນາມສະກຸນ, ເພດ, ສັນຊາດ;
4. ຂໍ້ມູນກ່ຽວກັບຊັບສິນ ເປັນຕົ້ນ ທຸລະກິດຕົ້ນຕໍ (ຜະລິດຕະພັນ ຫຼື ການບໍລິການ ແລະ ຮູບແບບການເຄື່ອນໄຫວທຸລະກິດ), ຕົວເລກ ຫຼື ອັດຕາສ່ວນ ທາງການເງິນສໍາຄັນ, ວິທີການກໍານົດລາຄາ (ຖ້າມີ) ແລະ ອື່ນໆ. ກໍລະນີ ຊັບສິນທີ່ບໍ່ແມ່ນຮຸ້ນ ຕ້ອງປະກອບມີຂໍ້ມູນ ຄື: ຄຸນລັກສະນະ, ປະເພດ, ກໍາມະສິດ, ຂໍ້ມູນກ່ຽວກັບການປະເມີນມູນຄ່າຊັບສິນໃນໄລຍະຜ່ານມາ (ຖ້າມີ) ແລະ ອື່ນໆ;

5. ຮູບແບບການຊໍາລະຄ່າຊັບສິນ (ເງິນສົດ ຫຼື ອອກຮຸ້ນ) ກໍລະນີ ອອກຮຸ້ນເພື່ອຊໍາລະຄ່າຊັບສິນ ຕ້ອງປະກອບມີຂໍ້ມູນກ່ຽວກັບວິທີການກໍານົດລາຄາຮຸ້ນ;

6. ເນື້ອໃນອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 17 ການກໍານົດມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ**

ສະພາບໍລິຫານ ຕ້ອງກໍານົດມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ເພື່ອກໍານົດສິດ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາກ່ຽວກັບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ. ພາຍຫຼັງສະພາບໍລິຫານ ໄດ້ກໍານົດມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນແລ້ວ ບໍລິສັດຈົດທະບຽນ ຕ້ອງແຈ້ງໃຫ້ຕະຫຼາດຫຼັກຊັບ ຊາບ ຢ່າງໜ້ອຍ 10 ວັນ ລັດຖະການ ກ່ອນວັນປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ.

ຕະຫຼາດຫຼັກຊັບ ຕ້ອງສະໜອງປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ໃຫ້ບໍລິສັດຈົດທະບຽນ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ເປັນຕົ້ນໄປ.

**ມາດຕາ 18 ບົດລາຍງານການໄດ້ມາ ແລະ ການຊື້ຂາດຊັບສິນ**

ບໍລິສັດຈົດທະບຽນ ຕ້ອງຈ້າງບໍລິສັດຫຼັກຊັບ ທີ່ເຮັດໜ້າທີ່ເປັນທີ່ປຶກສາທາງດ້ານການເງິນ ເພື່ອສ້າງບົດລາຍງານ ກ່ຽວກັບການໄດ້ມາ ແລະ ການຊື້ຂາດຊັບສິນ ຊຶ່ງປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຂໍ້ມູນທົ່ວໄປ ກ່ຽວກັບການໄດ້ມາ ແລະ ການຊື້ຂາດຊັບສິນ ເປັນຕົ້ນ ຄວາມເປັນມາ ແລະ ວັດຖຸປະສົງຂອງການໄດ້ມາ ແລະ ການຊື້ຂາດຊັບສິນ, ຂັ້ນຕອນ ແລະ ການອະນຸມັດຕ່າງໆທີ່ຕິດພັນ, ລາຍລະອຽດແຜນການຊື້ ຂາຍ, ຜົນກະທົບຕໍ່ບໍລິສັດຈົດທະບຽນ ແລະ ອື່ນໆ;

2. ຂໍ້ມູນ ກ່ຽວກັບຜູ້ຊື້ ຂາຍຊັບສິນ ເປັນຕົ້ນ ຂໍ້ມູນກ່ຽວກັບການເຄື່ອນໄຫວກິດຈະການ, ຕົວເລກ ແລະ ອັດຕາສ່ວນທາງການເງິນ, ຜູ້ມີອໍານາດຄວບຄຸມ ຂອງບໍລິສັດຈົດທະບຽນ; ຂໍ້ມູນກ່ຽວກັບ ຊື່ ແລະ ທີ່ຕັ້ງ, ທຶນຈົດທະບຽນ, ການດໍາເນີນທຸລະກິດ, ຕົວເລກ ແລະ ອັດຕາສ່ວນທາງການເງິນ, ໂຄງປະກອບການຈັດຕັ້ງ, ໂຄງສ້າງການຖືຮຸ້ນ ແລະ ຜູ້ມີອໍານາດຄວບຄຸມ, ຄວາມສໍາພັນກັບບໍລິສັດຈົດທະບຽນ ຫຼື ຜູ້ມີອໍານາດຄວບຄຸມຂອງບໍລິສັດຈົດທະບຽນ ຂອງຄູ່ຊື້ ຂາຍຊັບສິນ. ກໍລະນີ ເປັນບຸກຄົນ ຕ້ອງປະກອບມີຂໍ້ມູນກ່ຽວກັບ ຊື່ ແລະ ນາມສະກຸນ, ເພດ, ສັນຊາດ, ອາຊີບ, ປະຫວັດການດໍາເນີນທຸລະກິດ, ການລົງທຶນ ຫຼື ຖືຮຸ້ນໃນວິສາຫະກິດອື່ນ, ສາຍພົວພັນກັບບໍລິສັດຈົດທະບຽນ ຫຼື ຜູ້ມີອໍານາດຄວບຄຸມຂອງບໍລິສັດຈົດທະບຽນ ແລະ ອື່ນໆ;

3. ຂໍ້ມູນ ກ່ຽວກັບຊັບສິນ. ກໍລະນີ ຊັບສິນເປັນຮຸ້ນ ຕ້ອງປະກອບມີຂໍ້ມູນ ກ່ຽວກັບ ຊື່ ແລະ ທີ່ຕັ້ງ, ທຶນຈົດທະບຽນ, ການດໍາເນີນທຸລະກິດ, ຕົວເລກ ແລະ ອັດຕາສ່ວນທາງການເງິນ, ໂຄງຮ່າງການຈັດຕັ້ງ, ໂຄງສ້າງການຖືຮຸ້ນ ແລະ ຜູ້ມີອໍານາດຄວບຄຸມ ແລະ ພັນທະຕ່າງໆຕໍ່ພາຍນອກ ແລະ ອື່ນໆ. ກໍລະນີ ຊັບສິນບໍ່ແມ່ນຮຸ້ນ ຕ້ອງປະກອບມີຂໍ້ມູນ ກ່ຽວກັບຄຸນລັກສະນະ, ປະເພດ, ກໍາມະສິດ, ຂໍ້ມູນ ກ່ຽວກັບການປະເມີນມູນຄ່າຊັບສິນໃນໄລຍະຜ່ານມາ (ຖ້າມີ) ແລະ ອື່ນໆ;

4. ຂໍ້ມູນ ກ່ຽວກັບການປະເມີນມູນຄ່າ ຫຼື ການກໍານົດລາຄາ ຊັບສິນ ເປັນຕົ້ນ ວິທີການ, ຜົນການປະເມີນ ຫຼື ການກໍານົດລາຄາ, ສົມມຸດຕິຖານ ແລະ ປັດໃຈທີ່ສົ່ງຜົນກະທົບ, ຂໍ້ມູນ ແລະ ບ່ອນອີງໃນການປະເມີນ ຫຼື ການກໍານົດລາຄາ, ຂໍ້ມູນ ກ່ຽວກັບຜູ້ປະເມີນ, ຄໍາເຫັນຂອງສະພາບໍລິຫານຕໍ່ການປະເມີນ ຫຼື ການກໍານົດລາຄາ ແລະ ອື່ນໆ;

5. ຂໍ້ມູນ ກ່ຽວກັບເນື້ອໃນ ແລະ ເງື່ອນໄຂສໍາຄັນຂອງສັນຍາຕ່າງໆທີ່ຕິດພັນ;

6. ການວິເຄາະ ກ່ຽວກັບການໄດ້ມາ ແລະ ການຊື້ຂາດຊັບສິນຂອງສະພາບໍລິຫານ ເປັນຕົ້ນ ສະພາບການດໍາເນີນທຸລະກິດ ແລະ ຜົນການດໍາເນີນງານ, ຊັບສິນທີ່ໃຊ້ໃນການເຄື່ອນໄຫວກິດຈະການ, ຕົ້ນທຶນທີ່ຕິດພັນ ແລະ ການສ້າງກໍາໄລຂອງຊັບສິນຕົ້ນຕໍຂອງບໍລິສັດ, ຜະລິດຕະພັນ ຫຼື ການບໍລິການຕົ້ນຕໍ, ສັດສ່ວນແບ່ງຕະຫຼາດ, ຕົວເລກ ແລະ ອັດຕາສ່ວນທາງການເງິນ ແລະ ຄວາມສາມາດໃນການສ້າງກໍາໄລ ແລະ ອື່ນໆ ກ່ອນການໄດ້ມາ ແລະ ຊື້ຂາດຊັບສິນ; ວິເຄາະກ່ຽວກັບ ຄວາມສືບເນື່ອງໃນການເຄື່ອນໄຫວກິດຈະການ, ຄວາມສາມາດໃນການແຂ່ງຂັນ, ການຂະຫຍາຍກິດຈະການ, ອັດຕາສ່ວນທາງການເງິນສໍາຄັນຕ່າງໆ ແລະ ຜົນກະທົບຕໍ່ທິດທາງການພັດທະນາຂອງບໍລິສັດຈົດທະບຽນ ທີ່ຕິດພັນກັບການໄດ້ມາ ແລະ ຊື້ຂາດຊັບສິນໃນຄັ້ງນີ້;

7. ປັດໃຈຄວາມສ່ຽງທີ່ຕິດພັນກັບການໄດ້ມາ ແລະ ການຊື້ຂາດຊັບສິນ;

8. ຮູບແບບ, ວິທີການ ແລະ ແຫຼ່ງທຶນໃນການຊໍາລະຄ່າຊັບສິນ. ກໍລະນີ ບໍລິສັດຈົດທະບຽນ ອອກຈໍາໜ່າຍຮຸ້ນເພື່ອຊໍາລະຄ່າຊັບສິນ ຕ້ອງປະກອບມີຂໍ້ມູນຕົ້ນຕໍ ຄື: ຂໍ້ມູນກ່ຽວກັບຮຸ້ນທີ່ອອກຈໍາໜ່າຍ (ຈໍານວນ, ມູນຄ່າກໍານົດ, ສັດສ່ວນຮຸ້ນທີ່ອອກຈໍາໜ່າຍ), ການກໍານົດລາຄາຮຸ້ນ, ຂໍ້ຈໍາກັດໃນການໂອນຮຸ້ນ, ໂຄງສ້າງການຖືຮຸ້ນ ແລະ ໂຄງຮ່າງການຈັດຕັ້ງ ກ່ອນ ແລະ ຫຼັງ ການໄດ້ມາ ແລະ ການຊື້ຂາດຊັບສິນ ແລະ ອື່ນໆ;

9. ແຜນການນໍາໃຊ້ທຶນທີ່ໄດ້ຈາກການຂາຍຊັບສິນ;

10. ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນ;

11. ເນື້ອໃນອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 19 ຄໍາເຫັນຂອງທີ່ປຶກສາທາງດ້ານການເງິນອິດສະລະ**

ຄໍາເຫັນຂອງທີ່ປຶກສາທາງດ້ານການເງິນອິດສະລະ ຕ້ອງປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຄວາມເໝາະສົມ ແລະ ປະໂຫຍດຕໍ່ບໍລິສັດຈົດທະບຽນ;

2. ວິເຄາະລະອຽດກ່ຽວກັບວິທີການ ແລະ ຄວາມເໝາະສົມໃນການກໍານົດລາຄາ. ກໍລະນີ ນໍາໃຊ້ບົດປະເມີນມູນຄ່າຊັບສິນ ເປັນບ່ອນອີງໃນການກໍານົດລາຄາຊັບສິນ ທີ່ປຶກສາທາງດ້ານການເງິນອິດສະລະຕ້ອງມີຄໍາເຫັນຕໍ່ ຄວາມເປັນເອກະລາດ, ຄວາມເໝາະສົມທາງດ້ານສົມມຸດຖານ ແລະ ວິທີການ ທີ່ນໍາໃຊ້ເຂົ້າໃນການປະເມີນມູນຄ່າຊັບສິນ ແລະ ຜົນຂອງການປະເມີນມູນຄ່າຊັບສິນ ໂດຍບໍລິສັດປະເມີນມູນຄ່າຊັບສິນ;

3. ວິເຄາະລະອຽດກ່ຽວກັບ ການເຄື່ອນໄຫວກິດຈະການ, ຄວາມສາມາດໃນການແຂ່ງຂັນ, ການຄຸ້ມຄອງບໍລິຫານ ແລະ ອື່ນໆ ພາຍຫຼັງລາຍການໄດ້ມາ ແລະ ການຊື້ຂາດຂອງຊັບສິນ;

4. ບັນຫາສໍາຄັນອື່ນໆ.

**ມາດຕາ 20 ຄໍາເຫັນຂອງທີ່ປຶກສາດ້ານກົດໝາຍ**

ຄໍາເຫັນຂອງທີ່ປຶກສາດ້ານກົດໝາຍ ຕ້ອງປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຄວາມສອດຄ່ອງ ຕໍ່ລະບຽບການທີ່ກ່ຽວຂ້ອງ ຂອງລາຍການໄດ້ມາ ແລະ ການຊື້ຂາດຊັບສິນ;

2. ລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ໄດ້ຮັບການອະນຸມັດຕາມຂັ້ນຕອນ ຫຼື ຈາກພາກສ່ວນທີ່ກ່ຽວຂ້ອງ ແລ້ວ ຫຼື ບໍ່?;

3. ລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ເປັນລາຍການທີ່ກ່ຽວພັນ ຫຼື ບໍ່? ຖ້າແມ່ນ ໄດ້ດໍາເນີນການອະນຸມັດ ແລະ ການເປີດເຜີຍຂໍ້ມູນທີ່ຕິດພັນ ຕາມລະບຽບການທີ່ກ່ຽວຂ້ອງແລ້ວ ຫຼື ບໍ່?;

4. ຄວາມສອດຄ່ອງ ແລະ ຜົນສັກສິດ ຂອງສັນຍາຕ່າງໆ ທີ່ຕິດພັນກັບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ;

5. ຄວາມຈະແຈ້ງດ້ານກໍາມະສິດຂອງຊັບສິນ ແລະ ເອກະສານຢັ້ງຢືນກໍາມະສິດ;

6. ຂໍ້ຂັດແຍ່ງທາງດ້ານກົດໝາຍທີ່ຕິດພັນກັບຊັບສິນ;
7. ການນຳເອົາຊັບສິນເປັນຫຼັກຊັບຄ້ຳປະກັນ (ຖ້າມີ);
8. ບັນຫາອື່ນໆ.

**ມາດຕາ 21 ການເປີດເຜີຍໜັງສືແຈ້ງເຊີນປະຊຸມຜູ້ຖືຮຸ້ນ**

ບໍລິສັດຈົດທະບຽນ ຕ້ອງເປີດເຜີຍໜັງສືແຈ້ງເຊີນເຂົ້າຮ່ວມປະຊຸມຜູ້ຖືຮຸ້ນ, ບົດລາຍງານການໄດ້ມາ ແລະ ການຊື້ຂາດຊັບສິນ, ຄຳເຫັນຂອງທີ່ປຶກສາທາງດ້ານການເງິນອິດສະລະ ແລະ ທີ່ປຶກສາດ້ານກົດໝາຍ ໃຫ້ມວນຊົນຊາບ ໂດຍຜ່ານລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ ຢ່າງໜ້ອຍ 21 ວັນ ລັດຖະການ ກ່ອນມື້ເປີດກອງປະຊຸມຜູ້ຖືຮຸ້ນ.

**ມາດຕາ 22 ກອງປະຊຸມຜູ້ຖືຮຸ້ນ**

ກອງປະຊຸມຜູ້ຖືຮຸ້ນ ເພື່ອລົງມະຕິຮັບຮອງກ່ຽວກັບລາຍງານໄດ້ມາ ແລະ ການຊື້ຂາດຊັບສິນ ຕ້ອງໄດ້ຮັບອະນຸມັດດ້ວຍຄະແນນສຽງ ສອງສ່ວນສາມ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຢ່າງໜ້ອຍ ແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

**ມາດຕາ 23 ມະຕິກອງປະຊຸມຜູ້ຖືຮຸ້ນ**

ມະຕິກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດຈົດທະບຽນ ທີ່ຕິດພັນກັບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ຕ້ອງປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊັບສິນ ແລະ ຄູ່ຊື້-ຂາຍ (ຄູ່ສັນຍາ)
2. ລາຄາ ຫຼື ຂອບລາຄາ, ວິທີການ ແລະ ບ່ອນອີງໃນການກຳນົດລາຄາ ແລະ ແຜນການປັບປຸງລາຄາ
3. ຮູບແບບການຊຳລະຄ່າຊັບສິນ
4. ການມອບສິດໃຫ້ສະພາບໍລິຫານໃນການດຳເນີນການ ແລະ ຕັດສິນບັນຫາທີ່ຕິດພັນ
5. ເນື້ອໃນອື່ນໆ.

**ມາດຕາ 24 ການລາຍງານ ແລະ ການເປີດເຜີຍຂໍ້ມູນ ກ່ຽວກັບຜົນການດຳເນີນລາຍການໄດ້ມາ ແລະ ຊື້ຂາດຊັບສິນ**

ບໍລິສັດຈົດທະບຽນ ຕ້ອງລາຍງານ ແລະ ເປີດເຜີຍຂໍ້ມູນ ກ່ຽວກັບ ຜົນການດຳເນີນລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ພາຍໃນເວລາ 3 ວັນ ລັດຖະການ ພາຍຫຼັງສຳເລັດການໄດ້ມາ ແລະ ການຊື້ຂາດຂອງຊັບສິນ.

ພາຍໃນເວລາ 60 ວັນ ພາຍຫຼັງມະຕິກອງປະຊຸມຜູ້ຖືຮຸ້ນທີ່ຮັບຮອງກ່ຽວກັບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ກໍລະນີ ດຳເນີນການບໍ່ສຳເລັດ ບໍລິສັດຈົດທະບຽນ ຕ້ອງລາຍງານ ແລະ ເປີດເຜີຍຂໍ້ມູນ ກ່ຽວກັບຄວາມຄືບໜ້າຂອງລາຍການໄດ້ມາ ແລະ ການຊື້ຂາດຂອງຊັບສິນ ໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ມວນຊົນໄດ້ຮັບຊາບ (ລາຍງານ ແລະ ເປີດເຜີຍຂໍ້ມູນໃນມື້ທີ 60) ພ້ອມນັ້ນ ຕ້ອງລາຍງານ ແລະ ເປີດເຜີຍຂໍ້ມູນ ທຸກໆ 30 ວັນ ຈົນກວ່າ ຈະສຳເລັດ.

ພ້ອມນັ້ນ, ທີ່ປຶກສາທາງດ້ານການເງິນອິດສະລະ ແລະ ທີ່ປຶກສາທາງດ້ານກົດໝາຍ ຕ້ອງມີຄຳເຫັນຕໍ່ການດຳເນີນການ, ການໂອນກຳມະສິດ ແລະ ການປະຕິບັດຕາມເງື່ອນໄຂສັນຍາຕ່າງໆ ແລະ ອື່ນໆ ພ້ອມທັງລາຍງານ ແລະ ເປີດເຜີຍຂໍ້ມູນ ພາຍໃນເວລາ 5 ວັນ ລັດຖະການ ພາຍຫຼັງສຳເລັດການໄດ້ມາ ແລະ ການຊື້ຂາດຂອງຊັບສິນ.

## ໝວດທີ 4
## ຄະນະກຳມະການກວດສອບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ແລະ ທີ່ປຶກສາທາງດ້ານການເງິນອິດສະລະ

### ມາດຕາ 25 ຄະນະກຳມະການກວດສອບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ

ຄະນະກຳມະການກວດສອບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ແມ່ນຄະນະດຽວກັນກັບຄະນະກຳມະການກວດສອບລາຍງານທີ່ກ່ຽວພັນ ຫຼື ສາມາດແຕ່ງຕັ້ງຂຶ້ນມາໃໝ່ກໍໄດ້ ຊຶ່ງຄະນະດັ່ງກ່າວ ໄດ້ຮັບການແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍສະພາບໍລິຫານ ແລະ ມີອາຍຸການ 2 ປີ.

ຄະນະກຳມະການກວດສອບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ມີພາລະບົດບາດໃນການຕິດຕາມ ແລະ ກວດກາ ລາຍການດັ່ງກ່າວ ເພື່ອຮັບປະກັນຄວາມຖືກຕ້ອງ, ໂປ່ງໃສ ແລະ ຍຸຕິທຳ.

### ມາດຕາ 26 ການແຕ່ງຕັ້ງທີ່ປຶກສາທາງດ້ານການເງິນອິດສະລະ

ທີ່ປຶກສາທາງດ້ານການເງິນອິດສະລະ ແມ່ນບໍລິສັດກວດສອບ ທີ່ໃຫ້ບໍລິການດ້ານການບັນຊີ ແລະການກວດສອບ ຊຶ່ງໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ບໍລິສັດກວດສອບ ທີ່ໃຫ້ບໍລິການດ້ານການບັນຊີ ຫຼື ກວດສອບໃຫ້ແກ່ບໍລິສັດຈົດທະບຽນ ບໍ່ສາມາດເປັນທີ່ປຶກສາທາງດ້ານການເງິນອິດສະລະ ໃຫ້ແກ່ບໍລິສັດຈົດທະບຽນໄດ້ ໃນລະຫວ່າງທີ່ຕົນກຳລັງໃຫ້ບໍລິການແກ່ບໍລິສັດຈົດທະບຽນດັ່ງກ່າວ.

## ໝວດທີ 5
## ສິດ ແລະ ໜ້າທີ່ຂອງຄະນະກຳມະການກວດສອບ, ທີ່ປຶກສາທາງດ້ານການເງິນອິດສະລະ ແລະ ຂໍ້ຫ້າມ

### ມາດຕາ 27 ສິດ ແລະ ໜ້າທີ່ ຂອງຄະນະກຳມະການກວດສອບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ

ກຳມະການກວດສອບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນາ ກ່ຽວກັບທຸລະກຳທີ່ກ່ຽວຂ້ອງກັບການໄດ້ມາ ແລະການຊື້ຂາດຊັບສິນໃຫ້ຖືກຕ້ອງຕາມຄວາມເປັນຈິງ ແລະ ສອດຄ່ອງຕາມການກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
2. ພິຈາລະນາການອະນຸມັດລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ຕາມລະດັບຂັ້ນຂອງຕົນ;
3. ຕິດຕາມ ແລະ ກວດກາ ຂັ້ນຕອນການດຳເນີນທຸລະກຳ ການໄດ້ມາ ແລະ ການຊື້ຊັບສິນ;
4. ຄົ້ນຄວ້າການຄັດເລືອກ, ຍົກເລີກ ຫຼື ແຕ່ງຕັ້ງ ກ່ຽວກັບທີ່ປຶກສາທາງດ້ານການເງິນອິດສະລະ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການກຳນົດໃນລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 28 ສິດ ແລະ ໜ້າທີ່ ຂອງທີ່ປຶກສາທາງດ້ານການເງິນອິດສະລະ

ທີ່ປຶກສາທາງດ້ານການເງິນອິດສະລະ ມີສິດ ແລະ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ປະກອບຄຳເຫັນ ກ່ຽວກັບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ຕາມພາລະບົດບາດຂອງຕົນ ເພື່ອເປັນຂໍ້ມູນຊ່ວຍຜູ້ຖືຮຸ້ນໃນການພິຈາລະນາລາຍການດັ່ງກ່າວຂອງບໍລິສັດຈົດທະບຽນ;

2. ຮຽກເອົາຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງກັບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ ຈາກສະພາບໍລິຫານ ເປັນຕົ້ນ ລາຍລະອຽດກ່ຽວກັບການໄດ້ມາ ແລະ ການຊື້ຂາດຊັບສິນ, ສັນຍາຕ່າງໆ ແລະ ແຜນການໃນອະນາຄົດພາຍຫຼັງທີ່ຮັບການອະນຸມັດລາຍການໄດ້ມາ ແລະ ການຊື້ຂາດຊັບສິນ;

3. ສະຫຼຸບສັງລວມ ແລະ ວິເຄາະ ກ່ຽວກັບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ;

4. ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ເພື່ອປະກອບຄຳເຫັນ ແລະ ຊີ້ແຈງໃຫ້ເຫດຜົນຕໍ່ກັບລາຍການໄດ້ມາ ແລະ ການຊື້ຂາດຊັບສິນ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 29 ນະໂຍບາຍຕໍ່ຜູ້ມີຜົນງານ

ບໍລິສັດຈົດທະບຽນ ແລະ ພາກສ່ວນທີ່ກ່ຽວອື່ນທີ່ກ່ຽວຂ້ອງກັບການໄດ້ມາ ແລະ ການຊື້ຂາດຊັບສິນ ຢູ່ ສປປ ລາວ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນ ຕາມການກຳນົດໄວ້ໃນລະບຽບສະເພາະ.

### ມາດຕາ 30 ມາດຕະການຕໍ່ຜູ້ລະເມີດ

ບໍລິສັດຈົດທະບຽນ, ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບ ການໄດ້ມາ ແລະ ການຊື້ຂາດຊັບສິນ ຢູ່ ສປປ ລາວ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ດັ່ງນີ້:

### ມາດຕາ 31 ມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນ

ມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນມີ ດັ່ງນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະເບົາ ເປັນຕົ້ນ ມີການລາຍງານລ່າຊ້າ, ບໍ່ໃຫ້ການຮ່ວມມືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນກ່ຽວຂ້ອງ ແລະ ກໍລະນີອື່ນທີ່ການລະເມີດສ້າງຄວາມເສຍຫາຍບໍ່ເກີນ 1,000,000 ກີບ;

2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;

3. ກໍລະນີອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### ມາດຕາ 32 ມາດຕະການປັບໃໝ

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ການເປັນລະເມີດຄັ້ງທຳອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດສ້າງຄວາມເສຍຫາຍເກີນ 1.000.000, ມີເຈດຕະນາໃນການລະເມີດ, ບໍ່ສະໝັກໃຈ ແຈ້ງ ຫຼື ລາຍງານການລະເມີດຂອງຕົນ, ບໍ່ໃຫ້ການ ຮ່ວມມືກ່ຽວກັບການລະເມີດຂອງຕົນ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບຈະຖືກປັບໃໝ ຈຳນວນ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການລະເມີດຂອງຕົນ;

2. ການໃຫ້ຄຳເຫັນຕໍ່ລາຍການໄດ້ມາ ຫຼື ຊື້ຂາດຊັບສິນ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຈະຖືກປັບໃໝ 10.000.000 ກີບ.

**ມາດຕາ 33 ມາດຕະການເພີ່ມເຕີມ**

ມາດຕະການເພີ່ມ ດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນໃຫ້ຖືກຕ້ອງຕາມການກຳນົດຂອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ໂຈະ ແລະ/ຫຼື ຍົກເລີກ ກ່ຽວກັບການໄດ້ມາ ແລະ ການຊື້ຂາດຊັບສິນ;

3. ເປີດເຜີຍ ກ່ຽວກັບການລະເມີດຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 34 ການຈັດຕັ້ງປະຕິບັດ**

ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດຈົດທະບຽນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໄດ້ມາ ແລະ ການຊື້ຂາດຊັບສິນ ຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 35 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ປະທານ

ສອນໄຊ ສີພັນດອນ